


ອົງການຂົນສົ່ງສາທາລະນະເກາະຣອດ

# ສະພາບລວມ ແລະ ການມີສິດຕໍ່ການບໍລິ ການພິເສດການເດີນ ທາງຂອງຄົນພິການ ADA

## ຕິດຕໍ່ພວກເຮົາ

RIde: (401) 461-9760
RIPTA: (401) 781-9400
www.ripta.com
RideProgram@ripta.com

ອົງການຂົນສົ່ງສາທາລະນະເກາະຣອດ

# ຍິນດີຕ້ອນຮັບສູ່ການບໍລິການພິເສດການເດີນທາງຂອງຄົນພິການ RIPTA ADA

ການບໍລິການພິເສດການເດີນທາງ RIPTA ADA ແມ່ນໂຄງການສໍາລັບຄົນພິການ ທີ່ປ້ອງກັນບໍ່ໃຫ້ນໍາໃຊ້ລະບົບລົດເມຕາມເສັ້ນທາງທີ່ກໍານົດໄດ້. ນັບແຕ່ປີ 1990 ເປັນຕົ້ນມາ, ກົດໝາຍຄົນພິການອາເມຣິກາ (ADA) ໄດ້ຮຽກຮ້ອງອົງການຂົນສົ່ງສາທາລະນະທັງໝົດໃຫ້ການບໍລິການພິເສດການເດີນທາງໃຫ້ແກ່ຄົນພິການ ທີ່ສາມາດປຽບທຽບໄດ້ກັບການບໍລິການຕາມເສັ້ນທາງທີ່ກໍານົດໄວ້.

ການບໍລິການພິເສດການເດີນທາງໃຫ້ແກ່ຄົນພິການ ADA ສາມາດປຽບທຽບໄດ້ກັບການບໍລິການເສັ້ນທາງທີ່ກໍານົດໄວ້ໃນຫຼາຍວິທີ. ການບໍລິການເສັ້ນທາງທີ່ກໍານົດໄວ້ແມ່ນການບໍລິການຂົນສົ່ງທີ່ດໍາເນີນໄປຕາມກໍານົດເວລາໜຶ່ງ ແລະໄປຕາມເສັ້ນທາງທີ່ຕັ້ງໄວ້.   ການບໍລິການພິເສດການເດີນທາງໃຫ້ແກ່ຄົນພິການ ADA:

- ແມ່ນການບໍລິການການຂົນສົ່ງສາທາລະນະຂີ່ໄປຮ່ວມກັນ. ເນື່ອງຈາກເມື່ອໃຊ້ລົດເມ, ຄົນໂດຍສານຄາດວ່າຈະມີການຈອດຕາມເສັ້ນທາງໃຫ້ກັບຜູ້ໂດຍສານຄົນອື່ນ.
- ຖືກຈັດໃຫ້ໃນເວລາດຽວກັນ ແລະໃນສະຖານທີ່ດຽວກັນກັບການບໍລິການເສັ້ນທາງທີ່ກໍານົດໄວ້ປົກກະຕິ.  ຖ້າບໍ່ມີການບໍລິການເສັ້ນທາງກໍານົດໄວ້, ຈະບໍ່ມີການບໍລິການພິເສດການເດີນທາງໃຫ້ແກ່ຄົນພິການ ADA.
- ສະເໜີໃຫ້ເວລາການເດີນທາງສາມາດປຽບທຽບໄດ້ກັບການບໍລິການເສັ້ນທາງກໍານົດໄວ້, ລວມທັງເວລາທີ່ມັນຈະໃຊ້ ເພື່ອສົ່ງ ແລະຂຶ້ນ/ລົງຢູ່ປ້າຍຈອດລົດເມ.
- ບໍ່ສາມາດຈໍາກັດຈຸດປະສົງຂອງການເດີນທາງ.
- ອາດຈະຈອດສົ່ງຜູ້ໂດຍສານລົງກ່ອນເວລາ ເພື່ອໃຫ້ເຂົາເຈົ້າໄປທັນເວລານັດໝາຍ. ເນື່ອງຈາກເມື່ອໃຊ້ລົດເມ, ຜູ້ໂດຍສານອາດຈະຕ້ອງໄດ້ມາຮອດໄວກ່ອນໜຶ່ງຊົ່ວໂມງບໍ່ດັ່ງນັ້ນມີຄວາມສ່ຽງຕໍ່ການມາຊ້າ.
- ໃຫ້ການຕິດຕາມຜູ້ຂັບຂີ່ລະດັບດຽວກັນຂອງຜູ້ໂດຍສານຕາມການບໍລິການລົດເມໃນເສັ້ນທາງກໍານົດໄວ້. ຄົນຂັບລົດເມ ຫຼືລົດບໍລິການພິເສດໃຫ້ແກ່ການເດີນທາງຂອງຄົນພິການແມ່ນຈໍາເປັນຕ້ອງໄດ້ຂັບຂີ່ຢ່າງປອດໄພ ແລະຮັບປະກັນບໍ່ໃຫ້ຜູ້ໂດຍສານແຕກແຍກ ຫຼືເປັນອັນຕະລາຍຕໍ່ຜູ້ໂດຍສານຄົນອື່ນ.  ຄົນຂັບລົດບໍ່ຈໍາເປັນຕ້ອງໃຫ້ການດູແລຕິດຕາມ ຫຼືຕ້ອງຖ້າກັບບຸກຄົນອື່ນ ເມື່ອເຂົາເຈົ້າມາຮອດຈຸດໝາຍຂອງເຂົາເຈົ້າ ຖ້າອາຄານຍັງບໍ່ເປີດ ຫຼືບໍ່ມີຄົນທີ່ຈະບເຂົາເຈົ້າຢູ່ທີ່ນັ້ນ.

ການບໍລິການພິເສດການເດີນທາງໃຫ້ແກ່ຄົນພິການADA ແມ່ນແຕກຕ່າງຈາກການບໍລິການເສັ້ນທາງກໍານົດໄວ້ພຽງແຕ່ຢູ່ໃນລະດັບການຊ່ວຍເຫຼືອຜູ້ໂດຍສານທີ່ຈັດໃຫ້.  ຄົນຂັບລົດພິເສດການເດີນທາງໃຫ້ແກ່ຄົນພິການຈະຊ່ວຍຜູ້ໂດຍສານ ADA ຄົນໃດໜຶ່ງຂຶ້ນ ແລະລົງຈາກລົດ, ແລະອາດຈະໃຫ້ການບໍລິການເຖິງທີ່ ຖ້າມີຄວາມຈໍາເປັນ, ຂໍ້ມູນເພີ່ມເຕີມກ່ຽວກັບການຊ່ວຍເຫຼືອແມ່ນສາມາດເບິ່ງຢູ່ລຸ່ມນີ້ຢູ່ໃນຂໍ້ກ່ຽວກັບການໃຊ້ການບໍລິການ ADA, ຫຼືເບິ່ງປຶ້ມແນະນໍາຜູ້ໃຊ້ ADA ແຍກຕ່າງຫາກ.



# ໂຄງການ RIde

ໂຄງການ RIde ໃຫ້ການເດີນທາງແກ່ຄົນພິການ ADA ຜ່ານການບໍລິການລົດຕູ້ສິ່ງເຖິງທີ່ກ່ອນເວລາກຳນົດໄວ້. ບາງຄັ້ງຍັງໄດ້ໃຊ້ຫ້ອງຂັບເພື່ອໃຫ້ບໍລິການ. ທ່ານຕ້ອງໄດ້ຈອງກ່ອນຢ່າງໜ້ອຍໜຶ່ງວັນຂອງການເດີນທາງ ແລະ ການບໍລິການຈັດໃຫ້ຢູ່ພາຍໃນໜຶ່ງຊົ່ວໂມງຕາມເວລາວັນທີ່ຂ້ອຍຂໍ.

ນອກຈາກການເດີນທາງແກ່ຄົນພິການ ADA ແລ້ວ, ໂຄງການຍັງໃຫ້ການບໍລິການຂົນສົ່ງປະເພດອື່ນດ້ວຍມາດຕະຖານການບໍລິການ ແລະການມີສິດໄດ້ຮັບຕ່າງໆ. ການບໍລິການທີ່ໄດ້ອະທິບາຍໄວ້ຢູ່ໃນປຶ້ມແນະນຳນີ້ແມ່ນໃຊ້ກັບແຕ່ການບໍລິການພິເສດການເດີນທາງໃຫ້ແກ່ຄົນພິການ ADA ຂອງໂຄງການ RIde ເທົ່ານັ້ນ.

## ຫົວຂໍ້ທີ່ກວາມເອົາ

ການມີສິດໄດ້ຮັບການຈັດການເດີນທາງໃຫ້ແກ່ຄົນພິການ ADA

ການໃຊ້ການບໍລິການ ADA

ການໃຫ້ຄຳຄິດເຫັນ ແລະຄຳຕິຊົມ

ການບໍລິການລົດເມທີ່ສາມາດເຂົ້າເຖິງໄດ້ຂອງ RIPTA

# ການມີສິດໄດ້ຮັບການຈັດການເດີນທາງໃຫ້ແກ່ຄົນພິການ ADA

ເພື່ອໃຫ້ມີສິດໄດ້ຮັບການຈັດການເດີນທາງໃຫ້ແກ່ຄົນພິການ ADA, ທ່ານຕ້ອງບໍ່ສາມາດໃຊ້ລົດເມທີ່ສາມາດເຂົ້າເຖິງໄດ້ຂອງ RIPTA ໃນບາງເວລາ ຫຼືຕະຫຼອດເວລາ, ໂດຍທີ່ບໍ່ມີການຊ່ວຍເຫຼືອຂອງຄົນອື່ນ. ປຶ້ມແນະນຳສຳລັບການມີສິດໄດ້ຮັບມາຈາກກົດໝາຍຄົນພິການອາເມຣິກາ (ADA). ທ່ານມີສິດໃຊ້ການບໍລິການພິເສດການເດີນທາງໃຫ້ແກ່ຄົນພິການ ຖ້າທ່ານຕົກຢູ່ໃນໜຶ່ງໃນບັນດາໝວດຕໍ່ໄປນີ້ຄື:

1: ທ່ານບໍ່ສາມາດໃຊ້ລະບົບເສັ້ນທາງກຳນົດໄວ້ໄດ້. ທ່ານບໍ່ສາມາດຂຶ້ນ, ຂີ່, ຫຼືລົງຈາກລົດເມ RIPTA ທີ່ເຂົ້າເຖິງໄດ້ໃນບາງເວລາ ຫຼືຕະຫຼອດເວລາ.

2: ບໍ່ສາມາດເຂົ້າເຖິງລະບົບເສັ້ນທາງທີ່ກຳນົດໄວ້ໄດ້. ທ່ານສາມາດນຳທາງ, ຂຶ້ນ, ຂີ່, ແລະລົງຈາກພາຫະນະ RIPTA ທີ່ສາມາດເຂົ້າເຖິງໄດ້ໂດຍບໍ່ຕ້ອງອາໄສໃຜ, ແຕ່ບໍ່ມີພາຫະນະທີ່ເຂົ້າເຖິງໄດ້ຢູ່ໃນເສັ້ນທາງທີ່ໃຫ້ບໍລິການໄປຫາຈຸດໝາຍປາຍທາງສະເພາະ. ຜູ້ຂີ່ຢູ່ໃນໝວດນີ້ຕ້ອງໃຊ້ເສັ້ນທາງ/ພາຫະນະ RIPTA ທີ່ສາມາດເຂົ້າເຖິງໄດ້ທຸກເທື່ອທີ່ມີພວກມັນຢູ່. ທຸກພາຫະນະ RIPTA ແມ່ນສາມາດເຂົ້າເຖິງໄດ້.

3: ທ່ານບໍ່ສາມາດໄປຫາ ຫຼືຈາກລະບົບໄດ້. ທ່ານມີເງື່ອນໄຂສະເພາະທີ່ກ່ຽວຂ້ອງກັບຄວາມພິການ ທີ່ປ້ອງກັນບໍ່ໃຫ້ທ່ານເດີນທາງໄປຫາ ຫຼືຈາກປ້າຍລົດເມໄດ້ໃນບາງເວລາ ຫຼືຕະຫຼອດເວລາ.

**ຂ້ອຍຈະສະໝັກຂໍການເດີນທາງພິເສດໃຫ້ແກ່ຄົນພິການ ADA ໄດ້ແນວໃດ?** ຖ້າທ່ານຮູ້ສຶກວ່າ ທ່ານບໍ່ສາມາດໃຊ້ RIPTA ໄດ້ໃນບາງເວລາ ຫຼືຕະຫຼອດເວລາ ເນື່ອງຈາກຄວາມພິການ, ທ່ານອາດຈະຂໍໃບຄໍາຮ້ອງການບໍລິການເດີນທາງພິເສດໃຫ້ແກ່ຄົນພິການ ADA ໄດ້.

- ດາວໂຫຼດໃບຄໍາຮ້ອງໄດ້ຈາກ www.ripta.com.
- ເອົາໃບຄໍາຮ້ອງໄດ້ຢູ່ທີ່ RIPTA, 705 Elmwood Ave, Providence.
- ໂທຫາໂຄງການ The Ride Program ໄດ້ທີ່ເບີ (401) 461-9760.

ຖ້າທ່ານຕ້ອງການໃບຄໍາຮ້ອງຢູ່ໃນພໍແມັດທີ່ເຂົ້າເຖິງໄດ້ ຫຼືເປັນພາສາຕ່າງປະເທດ, ຫຼືຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການປະກອບໃບຄໍາຮ້ອງຂອງທ່ານ,
ກະລຸນາໂທຫາ ແລະບອກໃຫ້ພວກເຮົາຮູ້.

**ຄໍານິຍາມທີ່ສໍາຄັນ**

**ເວລາປະຕູເປີດໄປຮັບ:** ຜູ້ໂດຍສານຈະໄດ້ຮັບເວລາປະຕູເປີດໄປຮັບແທນເວລາທີ່ກໍານົດໄວ້. ຕົວຢ່າງ, ທ່ານອາດຈະໄດ້ຮັບການບອກວ່າ ການໄປຮັບເອົາທ່ານຈະຢູ່ໃນເວລາລະຫວ່າງ 9:00 ໂມງເຊົ້າຫາ 9:30 ໂມງເຊົ້າ. ຈະພິຈາລະນາວ່າລົດຕູ້ນັ້ນກົງເວລາ ຖ້າມັນມາຮອດໃນເວລາໃດໜຶ່ງໃນລະຫວ່າງເວລານີ້.

**ຮ່ອມທາງ ADA:** ການບໍລິການພິເສດການເດີນທາງໃຫ້ຄົນພິການ ADA ແມ່ນຈັດໃຫ້ພາຍໃນ ¾ ໄມຂອງເສັ້ນທາງກໍານົດໄວ້ປົກກະຕິ. ເສັ້ນທາງຜູ້ເດີນທາງໄປມາບໍ່ມີຮ່ອມທາງ ADA. ໄລຍະທາງ ¾ ໄມຖືກກໍານົດເປັນກາບິນ, ບໍ່ແມ່ນໂດຍທິດທາງການຂັບຂີ່. ການເດີນທາງມີໃຫ້ແຕ່ສໍາລັບການບໍລິການ ADA ຖ້າມັນທັງເລີ່ມຕົ້ນ ແລະສິ້ນສຸດພາຍໃນຮ່ອມທາງນີ້.

**ບໍ່ມາແຈ້ງ:** ຜູ້ໂດຍສານຈະໄດ້ຮັບການພິຈາລະນາວ່າ "ບໍ່ມາແຈ້ງ" ຖ້າລາວ/ນາງມີກໍານົດການເດີນທາງແລ້ວ ແລະບໍ່ຍົກເລີກມັນເປັນເວລາຢ່າງໜ້ອຍ 2 ຊົ່ວໂມງກ່ອນເລີ່ມຕົ້ນເວລາເປີດປະຕູໄປຮັບ.

**ຈະເກີດອັນໃດຂຶ້ນຫຼັງຈາກຂ້ອຍສົ່ງໃບຄໍາຮ້ອງຂໍການມີສິດໄດ້ຮັບຂອງຂ້ອຍ?** ສໍາລັບໃບຄໍາຮ້ອງທີ່ຈະໄດ້ຮັບການພິຈາລະນາວ່າຄົບຖ້ວນ, ທ່ານຕ້ອງຕອບຄໍາຖາມທັງໝົດ. ເມື່ອທ່ານສົ່ງໃບຄໍາຮ້ອງປະກອບຄົບຖ້ວນແລ້ວ, ພວກເຮົາຈະປະເມີນຂໍ້ມູນທີ່ທ່ານໃຫ້ມາ. ໃນບາງກໍລະນີອາດຈະຕ້ອງໄດ້ເອົາຂໍ້ມູນເພີ່ມເຕີມ ເພື່ອເຮັດການປະເມີນ. ພວກເຮົາຈະຕິດຕໍ່ກັບທ່ານ ຖ້າຈໍາເປັນຕ້ອງໄດ້ເອົາຂໍ້ມູນເພີ່ມເຕີມ.

**ການມີສິດໄດ້ຮັບເຕັມ ຫຼືມີເງື່ອນໄຂແມ່ນແນວໃດ?** ການມີສິດໄດ້ຮັບເຕັມໝາຍຄວາມວ່າ ທ່ານສາມາດໃຊ້ການເດີນທາງພິເສດໃຫ້ຜູ້ພິການ ADA ສໍາລັບທຸກການເດີນທາງຂອງທ່ານ.

ການມີສິດໄດ້ຮັບມີເງື່ອນໄຂໝາຍຄວາມວ່າ ທ່ານສາມາດໃຊ້ການບໍລິການລົດເມ RIPTA ໄດ້ສໍາລັບການເດີນທາງຂອງທ່ານໃນບາງຄັ້ງ. ຕົວຢ່າງ, ຄົນໜຶ່ງອາດຈະບໍ່ສາມາດໄປຫາສະຖານທີ່ສະເພາະໜຶ່ງໄດ້ ເພາະວ່າມັນຕ້ອງໄດ້ປີນຂຶ້ນພູຊັນຈາກບ່ອນປ້າຍຈອດລົດເມ ແລະຄວາມພິການເຮັດໃຫ້ລາວບໍ່ສາມາດຂຶ້ນພູນັ້ນໄດ້. ຄົນນີ້ຈະມີສິດໄດ້ຮັບການເດີນທາງພິເສດໃຫ້ຄົນພິການໄປຫາສະຖານທີ່ສະເພາະນັ້ນ, ແຕ່ບໍ່ແມ່ນການເດີນທາງໄປກັບ ເພາະວ່າລາວສາມາດລົງພູໄປຫາປ້າຍລົດເມໄດ້.



**ຖ້າພົບວ່າ ຂ້ອຍມີສິດໄດ້ຮັບ, ຂ້ອຍຈະສາມາດໃຊ້ທຸກການເດີນທາງຂອງຂ້ອຍຢູ່ໃນການເດີນທາງພິເສດໃຫ້ຄົນພິການ ADA ບໍ?** ອັນນັ້ນຂຶ້ນກັບທັງລະດັບການມີສິດໄດ້ຮັບຂອງທ່ານ ແລະການມີສິດໄດ້ຮັບຂອງການເດີນທາງຂອງທ່ານແຕ່ລະຄັ້ງ. ການມີສິດໄດ້ຮັບອາດຈະໄດ້ຮັບເຕັມ ຫຼືມີເງື່ອນໄຂ. ຖ້າພົບວ່າ ທ່ານມີສິດໄດ້ຮັບມີເງື່ອນໄຂ, ທ່ານສາມາດໃຊ້ການເດີນທາງພິເສດໃຫ້ຜູ້ພິການ ADA ພຽງແຕ່ການເດີນທາງສະເພາະເທົ່ານັ້ນ. ສໍາລັບບຸກຄົນທີ່ມີສິດໄດ້ຮັບທັງແບບເຕັມ ແລະມີເງື່ອນໄຂ, ການຂໍການເດີນທາງແຕ່ລະຄັ້ງແມ່ນໄດ້ຮັບປະເມີນສໍາລັບການມີສິດໄດ້ຮັບ ADA ສໍາລັບທັງສະຖານທີ່ ແລະເວລາ.

ຖ້າທ່ານສາມາດໃຊ້
ການເດີນທາງຂອງທ່ານຢູ່ໃນ
ລົດເມຕາມເສັ້ນທາງກຳນົດໄວ້,
ທ່ານຈະຕ້ອງໃຊ້
ການເດີນທາງຢູ່ໃນ
ລົດເມຕາມເສັ້ນທາງກຳນົດໄວ້

ກົດທົ່ວໄປທີ່ຈະຕ້ອງຈື່ ຖ້າທ່ານໄດ້ຮັບການກໍານົດວ່າມີສິດໄດ້ຮັບໂດຍມີເງື່ອນໄຂຄື: ຖ້າຂ້ອຍສາມາດເດີນທາງຢູ່ໃນ RIPTA, ຈາກນັ້ນ ຂ້ອຍຕ້ອງເດີນທາງຢູ່ໃນ RIPTA.  ເມື່ອທ່ານໄດ້ຮັບການກໍານົດວ່າມີສິດໄດ້ຮັບ, ພວກເຮົາຈະສົ່ງໜັງສືການມີສິດໄດ້ຮັບໃຫ້ແກ່ທ່ານ. ຂໍ້ຈໍາກັດໃດໜຶ່ງສໍາລັບການໃຊ້ທີ່ມີເງື່ອນໄຂຈະຖືກບັນທຶກໄວ້ໃນໜັງສືນີ້ ແລະຈະເປັນສ່ວນໜຶ່ງຂອງການບັນທຶກຂອງທ່ານ. ພະນັກງານໂຄງການ RIde Program ສາມາດຊ່ວຍທ່ານກໍານົດໄດ້ວ່າ ການເດີນທາງໃດທີ່ທ່ານມີສິດໄດ້ຮັບ ເພື່ອໃຊ້ການເດີນທາງພິເສດໃຫ້ຜູ້ພິການ ADA ແລະການເດີນທາງໃດທີ່ທ່ານຕ້ອງໃຊ້ຢູ່ໃນ RIPTA.

**ຖ້າຂ້ອຍມີສິດໄດ້ຮັບ, ເປັນຫຍັງຂ້ອຍຈຶ່ງບໍ່ມີສິດໄດ້ຮັບໝົດທຸກການເດີນທາງ?** ການເດີນທາງມີສິດໄດ້ຮັບ ຖ້າເຂົາເຈົ້າເລີ່ມຕົ້ນ ແລະສິ້ນສຸດພາຍໃນຮ່ອມທາງ ADA ¾ ໄມລ໌ ໃນລະຫວ່າງເວລາ ເມື່ອການບໍລິການລົດເມ RIPTA ຢູ່ໃນພື້ນທີ່ບ່ອນມີຢູ່.

ຕົວຢ່າງ, ທ່ານອາດມີສິດໄດ້ຮັບ ADA ເພາະວ່າຄວາມພິການຂອງທ່ານບໍ່ໃຫ້ທ່ານໃຊ້ລົດເມເສັ້ນທາງກໍານົດໄວ້, ແຕ່ທີ່ຢູ່ບ້ານຂອງທ່ານເປັນໜຶ່ງໄມລ໌ຈາກເສັ້ນທາງກໍານົດໄວ້ໃກ້ທີ່ສຸດ.  ການເດີນທາງໄປ ຫຼືຈາກບ້ານຂອງທ່ານຈະບໍ່ມີສິດໄດ້ຮັບການບໍລິການຂອງທ່ານ.  ຕົວຢ່າງອື່ນກໍ່ແມ່ນວ່າ ທ່ານມີສິດໄດ້ຮັບ ແລະບ້ານຂອງທ່ານແມ່ນ ½ ໄມ ຈາກເສັ້ນທາງລົດເມ ທີ່ເປີດບໍລິການຈົນຮອດ 6:00 ໂມງແລງ, ແລະບໍ່ໃຊ້ງານໃນວັນເສົາອາທິດ.  ໃນກໍລະນີນີ້, ການເດີນທາງຈາກບ້ານຂອງທ່ານຈະມີສິດຮອດແຕ່ 6:00 ໂມງແລງໃນວັນເຮັດການເທົ່ານັ້ນ ແລະຈະບໍ່ມີສິດໄດ້ຮັບໃນວັນທ້າຍອາທິດ.

**ການມີສິດໄດ້ຮັບຂອງຂ້ອຍຈະດົນປານໃດ?**  ໂດຍທົ່ວໄປແລ້ວ, ການມີສິດໄດ້ຮັບແມ່ນຈະດີສໍາລັບຫ້າປີ. ໃນບາງກໍລະນີ, ການມີສິດໄດ້ຮັບອາດຈະອີງຕາມເງື່ອນໄຂຊົ່ວຄາວເຊັ່ນ: ສະພາບການແຕກຫັກ, ແລະດັ່ງນັ້ນ ຈຶ່ງຈໍາກັດຕໍ່ໄລຍະຊົ່ວຄາວ.  ຫຼັງຈາກການມີສິດໄດ້ຮັບຂອງທ່ານໝົດອາຍຸໄປ, ທ່ານຈະຕ້ອງໄດ້ສະໝັກໃໝ່ ຖ້າທ່ານຮູ້ສຶກວ່າ ທ່ານຍັງມີສິດໄດ້ຮັບຢູ່.

**ຖ້າຂ້ອຍຖືກປະຕິເສດການມີສິດໄດ້ຮັບ ADA, ຂ້ອຍສາມາດອຸທອນໄດ້ບໍ?** ຖ້າທ່ານຖືກປະຕິເສດການມີສິດໄດ້ຮັບ, ທ່ານຈະສາມາດອຸທອນໄດ້. ທ່ານຈະຕ້ອງໄດ້ຍື່ນການອຸທອນພາຍໃນ 60 ວັນ ຂອງການປະຕິເສດ. ເມື່ອພວກເຮົາໄດ້ຮັບການຂໍອຸທອນຂອງທ່ານ, ພວກເຮົາຈະແຈ້ງໃຫ້ທ່ານຮູ້ກ່ຽວກັບເວລາ ແລະສະຖານທີ່ຂອງການພິຈາລະນາສືບສວນ. ທ່ານໄດ້ຮັບການສົ່ງເສີມເຕັມທີ່ໃຫ້ເຂົ້າຮ່ວມໃນການພິຈາລະນາສືບສວນການອຸທອນ, ແຕ່ການເຂົ້າຮ່ວມຂອງທ່ານກໍ່ບໍ່ຈຳເປັນ. ຖ້າທ່ານເຂົ້າຮ່ວມ, ທ່ານອາດຈະນຳເອົາບາງຄົນມາກັບທ່ານ ເພື່ອຊ່ວຍທ່ານນຳສະເໜີການອຸທອນຂອງທ່ານ.

ພະນັກງານ RIde ຈະເຂົ້າຮ່ວມການພິຈາລະນາສືບສວນ ເພື່ອອະທິບາຍວ່າ ເປັນຫຍັງເຂົາເຈົ້າປະຕິເສດໃບຄຳຮ້ອງການມີສິດໄດ້ຮັບ, ແລະທ່ານຈະໄດ້ຮັບເວລາ ເພື່ອອະທິບາຍວ່າ ເປັນຫຍັງທ່ານຈຶ່ງເຊື່ອວ່າທ່ານມີສິດໄດ້ຮັບ. ຖ້າຈຳເປັນ, ກະລຸນາບອກໃຫ້ພວກເຮົາຮູ້ ຖ້າທ່ານຕ້ອງການຜູ້ແປພາສາຕ່າງປະເທດ ຫຼືຜູ້ແປພາສາໃຫ້ຄົນຫູໜວກ ຫຼືຫູຕຶງ. RIde ຈະຈັດການບໍລິການຜູ້ແປພາສາໃຫ້ ໂດຍທ່ານບໍ່ຕ້ອງຈ່າຍຄ່າໃດ. ທ່ານຍັງອາດຈະຂໍການເດີນທາງໄປຫາ ແລະຈາກການພິຈາລະນາສືບສວນໂດຍບໍ່ມີຄ່າໃຊ້ຈ່າຍກັບທ່ານ.

**ຂໍ້ມູນສ່ວນຕົວຂອງຂ້ອຍຈະຖືກເກັບຮັກສາເປັນຄວາມລັບບໍ?** ແມ່ນແລ້ວ. ທຸກຂໍ້ມູນສ່ວນຕົວແມ່ນຈະຖືກເກັບເປັນຄວາມລັບ ແລະຈະມີພຽງແຕ່ຂໍ້ມູນທີ່ຈຳເປັນກ່ຽວກັບການບໍລິການຂົນສົ່ງໃນລະດັບພຽງພໍທີ່ຈະເອົາໃຫ້ກັບຜູ້ໃຫ້ການບໍລິການຂົນສົ່ງ. ຫ້ອງການໂຄງການ RIde Program ຈະຮັກສາຂໍ້ມູນທີ່ທ່ານໃຫ້ຢູ່ໃນໃບຄຳຮ້ອງຂອງທ່ານທີ່ທ່ານໃຫ້ມາ, ໃນການສຳພາດ, ຫຼືຈາກການພິສູດທາງດ້ານການແພດເທົ່ານັ້ນ. ຖ້າທ່ານອຸທອນ, ຂໍ້ມູນນີ້ຈະຖືກເອົາແບ່ງປັນກັບ ຜູ້ກວດກາການອຸທອນ ເພື່ອວ່າ ທ່ານອາດຈະໄດ້ຮັບການພິຈາລະນາສືບສວນທີ່ເປັນທຳ ແລະຄົບຖ້ວນ. ຜູ້ກວດກາຄຳອຸທອນຍັງຕ້ອງປະຕິບັດຕາມສິດຕໍ່ການຮັກສາຄວາມລັບນຳ.

**ຈະເຮັດແນວໃດຖ້າຂ້ອຍອອກໄປຈາກເກາະຣອດ ແລະຕ້ອງການໃຫ້ມີການບໍລິການພິເສດການເດີນທາງຜູ້ພິການ ADA?**
ເມື່ອທ່ານໄດ້ຮັບການຢັ້ງຢືນເປັນ ADA ເພື່ອໃຊ້ການບໍລິການພິເສດໃຫ້ຜູ້ພິການ, ທ່ານຍັງມີສິດໄດ້ຮັບການບໍລິການຢູ່ໃນລັດອື່ນເປັນເວລາເຖິງ 21 ວັນ. ຕິດຕໍ່ກັບອົງການຂົນສົ່ງໃນທ້ອງຖິ່ນກ່ອນການເດີນທາງຂອງທ່ານ ເພື່ອຂໍຂໍ້ມູນເພີ່ມເຕີມ. ເຂົາເຈົ້າຈະອະທິບາຍການຈັດແຈງ, ຄ່າໂດຍສານ, ເວລາດຳເນີນການ, ແລະຕາຕະລາງເວລາຂອງເຂົາເຈົ້າ.

## ນັກທ່ອງທ່ຽວຈາກລັດອື່ນ

**ຂ້ອຍສາມາດຂີ່ໄດ້ບໍ ຖ້າຂ້ອຍເປັນນັກທ່ອງທ່ຽວມາທ່ຽວເກາະຣອດ?** ບຸກຄົນທີ່ ADA ຢັ້ງຢືນໃຫ້ມາທ່ອງທ່ຽວໂດຍທີ່ມາຈາກລັດອື່ນຈະໄດ້ຮັບການບໍລິການໃຫ້ເປັນເວລາເຖິງ 21 ວັນ ໃນໄລຍະຮອບສິບສອງເດືອນ. ຖ້າທ່ານຕ້ອງການໃຫ້ມີການບໍລິການຫຼາຍກ່ວາ 21 ວັນ, ທ່ານຕ້ອງຮ້ອງຂໍການມີສິດໄດ້ຮັບ RIPTA ADA. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາໂທຫາ RIde ທີ່ເບີ (401) 461-9760 ລ່ວງໜ້າກ່ອນການມາທ່ອງທ່ຽວຂອງທ່ານ.

# ການໃຊ້ການບໍລິການ ADA

ກະລຸນາເບິ່ງຂໍ້ແນະນຳຜູ້ໃຊ້ຂອງ ADA
ເພື່ອເບິ່ງຂໍ້ມູນລະອຽດ
ກ່ຽວກັບການໃຊ້ການບໍລິການ ADA

ນີ້ແມ່ນບາງຈຸດທີ່ຈະຕ້ອງຈື່ໄວ້ກ່ຽວກັບການບໍລິການພິເສດການເດີນທາງໃຫ້ຜູ້ພິການ ADA.

**ເວລາ ແລະສະຖານທີ່ຂອງການບໍລິການພິເສດການເດີນທາງໃຫ້ຜູ້ພິການ ADA**: ການບໍລິການ ADA ແມ່ນຈັດໃຫ້ຢູ່ໃນພື້ນທີ່ດຽວກັນ ແລະໃນເວລາດຽວກັນກັບການບໍລິການເສັ້ນທາງກຳນົດໃຫ້ຂອງ RIPTA. ຕົວຢ່າງ, ຖ້າພື້ນທີ່ມີການບໍລິການລົດເມໃນວັນອາທິດ, ມັນຈະມີການບໍລິການ ADA ທີ່ກົງກັນ. ການບໍລິການ ADA ໄດ້ຮັບການສະເໜີໃຫ້ໃນຮ່ອມທາງ ¾ ໄມ ຮອບເສັ້ນທາງກຳນົດໄວ້ປົກກະຕິ. ເສັ້ນທາງຜູ້ເດີນທາງໄປມາ ແລະການເດີນທາງເສັ້ນທາງຫຼວງປະຕູປິດບໍ່ລວມຢູ່ໃນເງື່ອນໄຂກຳນົດຂອງ ADA.

**ຄ່າໂດຍສານ ADA**: ຄ່າໂດຍສານ ADA ມີລາຄາເປັນສອງເທົ່າຂອງຄ່າໂດຍສານເສັ້ນທາງກຳນົດໄວ້. ເດັກນ້ອຍອາຍຸຫ້າປີລົງມາອາດຈະບໍ່ຕ້ອງເສຍຄ່າ ໂດຍທີ່ຂີ່ໄປກັບຜູ້ໃຫຍ່ທີ່ຈ່າຍຄ່າໂດຍສານແລ້ວ. ໃນຂະນະທີ່ຜູ້ຊ່ວຍດູແລສ່ວນຕົວ (PCA) ອາດຈະເດີນທາງໄປນຳໂດຍບໍ່ຕ້ອງຈ່າຍຄ່າໂດຍສານ, ຢ່າງນ້ອຍຜູ້ໂດຍສານໜຶ່ງຄົນຕ້ອງຈ່າຍຄ່າໂດຍສານເຕັມ. ຕ້ອງຈ່າຍຄ່າໂດຍສານ ເມື່ອຜູ້ໃຫຍ່ເດີນທາງເປັນ PCA ຂອງເດັກນ້ອຍທີ່ບໍ່ເສຍຄ່າ. ໃນທຳນອງດຽວກັນ, ຜູ້ໂດຍສານສອງຄົນບໍ່ສາມາດອ້າງຕົວເຊິ່ງກັນແລະກັນວ່າເປັນ PCA ໝົດ ເພື່ອຈະບໍ່ຈ່າຍຄ່າໂດຍສານ.

**ການຊ່ວຍເຫຼືອ**: ການຊ່ວຍເຫຼືອລວມມີ ເຊິ່ງບໍ່ຈຳກັດແຕ່:

- ການສະເໜີໃຫ້ຜູ້ໂດຍສານທີ່ຍ່າງໄດ້ດ້ວຍການມີໄມ້ຄໍ້າແຂນ ຫຼືການຊ່ວຍເຫຼືອທີ່ເໝາະສົມກັບການຍ່າງ ຫຼືຂຶ້ນຂັ້ນໄດ.
- ການຊ່ວຍຄົນທີ່ໃຊ້ລໍ້ເຂັນ ເພື່ອຊ້ອມໄປຕາມທາງລາດມາດຕະຖານ ແລະໄປຫາ/ຈາກປະຕູໃຫຍ່.
- ການພາທາງຜູ້ທີ່ມີບັນຫາທາງສາຍຕາໄປຫາ/ຈາກປະຕູໃຫຍ່.

**ເວລາປະຕູເປີດໄປຮັບ**: ທ່ານຄວນກຽມພ້ອມໃຫ້ໄປຮັບໄດ້ທຸກເວລາໃນລະຫວ່າງເວລາປະຕູເປີດໄປຮັບ 30 ນາທີ. ຫຼາຍຄັ້ງທີ່ຄົນຂັບລົດອາດຈະໄປຮອດປະຕູເປີດໄປຮັບກ່ອນເວລາກຳນົດໄວ້. ທ່ານມີຕົວເລືອກວ່າ ຈະໃຫ້ອອກໄປກ່ອນເວລາບໍ ຫຼືໃຫ້ຜູ້ຂັບຂີ່ລໍຖ້າຮອດເວລາ, ແຕ່ທ່ານຕ້ອງຂຶ້ນລົດໃນການເລີ່ມຕົ້ນເວລາປະຕູເປີດໄປຮັບ. ຖ້າທ່ານບໍ່ພ້ອມທີ່ຈະໄປ ເມື່ອຄົນຂັບລົດມາຮອດ, ທ່ານອາດຈະຕ້ອງໄດ້ປະກາດເປັນ "ບໍ່ມາແຈ້ງ" ແລະຄົນຂັບລົດຈະອອກໄປ.

**ບໍ່ອະນຸຍາດໃຫ້ຄົນຂັບລົດ**:

- ເຂົ້າໄປໃນບ້ານຂອງຜູ້ຂີ່.
- ໃຫ້ການຊ່ວຍເຫຼືອສ່ວນຕົວເຊັ່ນ: ການຊ່ວຍນຸ່ງເຄື່ອງ.
- ຍົກ ຫຼືອຸ້ມຜູ້ໂດຍສານ.
- ຊ່ວຍຜູ້ຂີ່ດ້ວຍການໃຊ້ລົດເຂັນຂຶ້ນ ຫຼືລົງຂັ້ນໄດ.
- ລໍຖ້າຜູ້ຂີ່ ເພື່ອຈອດລົດທຳທຸລະກຳເຊັ່ນ: ຢູ່ທີ່ຕູ້ ATM ຫຼືຮ້ານຂາຍຢາ.
- ໄປນຳຜູ້ໂດຍສານເກີນຫ້ອງລໍຖ້າ ຫຼືປະຕູໜ້າ.
- ຮັບເອົາເງິນທິບ ຫຼືລາງວັນຂອບໃຈອື່ນໆ.
- ເຮັດວຽກແທນຜູ້ຂີ່ເຊັ່ນ: ການໄປເອົາໃບສັ່ງຢາ.

# ບອກໃຫ້ພວກເຮົາຮູ້ໃນສິ່ງທີ່ພວກເຮົາກຳລັງເຮັດ

**ຄຳຕໍ່ວ່າ ແລະຄຳຊົມເຊີຍ**

ພວກເຮົາລະດົມໃຫ້ທ່ານບອກໃຫ້ໂຄງການ RIde Program ຮູ້ ເມື່ອທ່ານໄດ້ຮັບການບໍລິການພິເສດ ແລະ ເມື່ອການບໍລິການຂອງທ່ານບໍ່ດີ. ຖ້າທ່ານຢາກຈະຍື່ນຄຳຕໍ່ວ່າ ແລະຄຳຊົມເຊີຍເປັນທາງການກ່ຽວກັບການບໍລິການດ້ານໃດໜຶ່ງຂອງພວກເຮົາ, ທ່ານອາດຈະເຮັດໄດ້ຜ່ານ:

1. ທາງອີເມວໄດ້ທີ່ RideProgram@ripta.com.

2. ເວັບໄຊທ໌ຂອງພວກເຮົາທີ່ www.ripta.com.

3. ສົ່ງທາງໄປສະນີຫາ:

   RIde Customer Service
   705 Elmwood Avenue
   Providence, RI 02907

4. ໂທຫາພວກເຮົາໂດຍກົງໄດ້ທີ່ເບີ (401) 461-9760.

ເມື່ອທ່ານໂທ ຫຼືຂຽນໜັງສືຫາ, ກະລຸນາໃຫ້ລາຍລະອຽດຫຼາຍເທົ່າທີ່ຈະຫຼາຍໄດ້, ລວມທັງຂໍ້ມູນ ແລະເວລາຂອງການໄປຮັບ ແລະໄປສົ່ງໃຫ້ລົງ, ເລກພາຫະນະ, ຊື່ຄົນຂັບ. ທ່ານຍິ່ງໃຫ້ຂໍ້ມູນຫຼາຍເທົ່າໃດ, ພວກເຮົາຍິ່ງສາມາດຄົ້ນຄ້ວາຄຳຮ້ອງຮຽນຂອງທ່ານ ຫຼືສົ່ງຄຳຊົມເຊີຍຂອງທ່ານຫຼາຍເທົ່ານັ້ນ. ພວກເຮົາຈະຕິດຕາມຄຳຮ້ອງຮຽນຂອງທ່ານ ແລະຕອບຄືນຫາທ່ານ, ປົກກະຕິແມ່ນພາຍໃນ 14 ວັນ. ຄຳຊົມເຊີຍ ແລະຄຳຮ້ອງຮຽນທີ່ບໍ່ເປີດເຜີຍຕົວຕົນກໍ່ຍອມຮັບໄດ້.

**ຄະນະກຳມະການຊີ້ນຳການຂົນສົ່ງທີ່ສາມາດເຂົ້າເຖິງໄດ້ (ATAC)**

ATAC ແມ່ນອົງການໃຫ້ຄຳປຶກສາແກ່ຜູ້ຂີ່, ຕົວແທນອົງການ, ແລະຜູ້ອື່ນໆ ເພື່ອໃຫ້ຄຳຄິດເຫັນໃສ່ການບໍລິການ RIPTA ທັງໝົດ, ລວມທັງໂຄງການ RIde Program ແລະການບໍລິການລົດເມຕາມເສັ້ນທາງກຳນົດໄວ້ທັງໝົດ. ທາງ ATAC ປະຊຸມກັນເປັນປົກກະຕິເພື່ອປຶກສາຫາລື ແລະໃຫ້ຄຳຄິດເຫັນແກ່ RIPTA. ເພື່ອໃຫ້ມີສ່ວນເຂົ້າຮ່ວມ, ໂທຫາ RIPTA ທີ່ເບີ (401) 784-9500 ຕໍ່ຫາ 242

**ການສຳຫຼວດຜູ້ຂີ່**

ພວກເຮົາອາດຈະຕິດຕໍ່ຫາທ່ານເປັນບາງຄັ້ງຄາວ ໃນສ່ວນທີ່ເປັນການສຸ່ມສຳຫຼວດ ເພື່ອຖາມທ່ານກ່ຽວກັບການບໍລິການທີ່ທ່ານໄດ້ຮັບ. ລາຍຊື່ນີ້ຈະເກີດຂຶ້ນໂດຍທາງໂທລະສັບ ຫຼືທາງໄປສະນີສະຫະລັດເທົ່ານັ້ນ. ຈະບໍ່ມີການຖາມຂໍ້ມູນສ່ວນຕົວ, ແລະທ່ານບໍ່ຄວນໃຫ້ຂໍ້ມູນສ່ວນຕົວໃດທີ່ທ່ານບໍ່ຢາກຈະແບ່ງປັນໄດ້. ການເຂົ້າຮ່ວມໃນການສຳຫຼວດແມ່ນເປັນການສະໝັກໃຈທັງໝົດ.

ຖ້າທ່ານຕອບຄຳຖາມການສຳຫຼວດຂອງພວກເຮົາ, ຊື່ຂອງທ່ານແມ່ນຈະບໍ່ມີການນຳໄປໃຊ້ຢູ່ໃນຂໍ້ມູນທີ່ພວກເຮົາເປີດເຜີຍຕໍ່ສັງຄົມ. ຂໍ້ມູນທີ່ພວກເຮົາເກັບເອົາຈາກທ່ານກ່ຽວກັບການບໍລິການຂອງພວກເຮົາ ແມ່ນໄດ້ນຳໄປໃຊ້ເພື່ອຊ່ວຍພວກເຮົາອອກແບບການບໍລິການອັນໃໝ່ ຫຼືປັບປຸງການບໍລິການທີ່ມີຢູ່. ໂຄງການ RIde Program ຈະບໍ່ພະຍາຍາມຂາຍຜະລິດຕະພັນ ຫຼືການບໍລິການໃດໃຫ້ກັບທ່ານ.

# ການບໍລິການລົດເມທີ່ສາມາດເຂົ້າເຖິງໄດ້ຂອງ RIPTA

ເນື່ອງຈາກວ່າ ຜູ້ຊື້ການບໍລິການເດີນທາງພິເສດໃຫ້ຜູ້ພິການ ADA ຫຼາຍຄົນໃຊ້ການບໍລິການຂອງ RIPTA ໃນບາງການເດີນທາງຂອງເຂົາເຈົ້າ, ພວກເຮົາກຳລັງສະເໜີໃຫ້ເຫັນສະພາບລວມກ່ຽວກັບການບໍລິການລົດເມທີ່ສາມາດເຂົ້າເຖິງໄດ້ຂອງ RIPTA. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເຂົ້າເບິ່ງເວັບໄຊທ໌ RIPTA ຢູ່ທີ່ www.ripta.com ຫຼືໂທຫາເບີ (401) 781-9400.

**ການບໍລິການທີ່ສາມາດເຂົ້າເຖິງໄດ້ຂອງ RIPTA**
ລົດເມທຸກຄັນຂອງ RIPTA ແມ່ນສາມາດເຂົ້າເຖິງໄດ້. ລົດເມທຸກຄັນຂອງ RIPTA ແລະລໍ້ຊຸກແມ່ນ.
ຖືກຕິດຕັ້ງມາກັບ:

- ຄວາມອາດສາມາດທີ່ຈະຄຸເຂົ່າລົງ ຫຼືຫຍໍ້ລົງ ເພື່ອເຮັດໃຫ້ການຂຶ້ນຍົນໄດ້ງ່າຍຂຶ້ນ.
- ລິບຕ໌ (ຢູ່ເທິງລົດເມພື້ນສູງ) ຫຼືທາງລາດ (ຢູ່ໃນລົດບັດພື້ນຕໍ່າ).
- ພື້ນທີ່ມີຄວາມປອໄພສອງບ່ອນສຳລັບອຸປະກອນເຄື່ອນທີ່ດ້ວຍລໍ້.
- ປ້າຍບອກຈຸດໝາຍປາຍທາງທີ່ມີຄວາມແຈ້ງ ແລະອ່ານໄດ້ງ່າຍ.
- ພື້ນທີ່ຕັ່ງບຸລິມະສິດຢູ່ໃນດ້ານໜ້າລົດເມ.

ລູກຄ້າທຸກຄົນມີສິດໃຊ້ອຸປະກອນຄວາມສາມາດເຂົ້າເຖິງໄດ້ (ເຊັ່ນ ທາງລາດ ແລະລິບຕ໌).

ສັດໃຫ້ບໍລິການແມ່ນຈະໄດ້ຮັບການຕອ້ນັບຢູ່ໃນພາຫະສະ ແລະບຸລິມະສິດຂອງ RIPTA.



ຄົນບັນຊາລົດເມຈະພະຍາຍາມທຸກຄັ້ງ ເພື່ອເຄື່ອນໄປເຖິງຂອງທາງຢູ່ບ່ອນປ້າຍລົດເມ. ຖ້າທ່ານບໍ່ສາມາດເອົາລົດເຂົ້າໄປຮອດຂອບທາງໄດ້, ຄົນບັນຊາລົດຈະຮັບເອົາທ່ານ ຫຼືໃຫ້ທ່ານລົງຢູ່ໃນບ່ອນປອດໄພກ່ວາຢູ່ບໍລິເວນໃກ້ຄຽງທີ່ມີຄວາມປອດໄພ.

ສ່ວນໃຫຍ່ແລ້ວນັ້ນ ຄົນບັນຊາລົດເມອາດຈະເອົາຜູ້ໂດຍສານຢູ່ໃນອຸປະກອນເຄື່ອນທີ່ເປັນລໍ້ຊຸກຂຶ້ນກ່ອນລູກຄ້າຄົນອື່ນໆ.

ມັນແມ່ນນະໂຍບາຍຂອງ RIPTA ເພື່ອຮັບປະກັນອຸປະກອນເຄື່ອນທີ່ດ້ວຍລໍ້ທັງໝົດ ໃນຂະນະທີ່ຂຶ້ນລົດເມ.

ຄົນຂັບລົດເມຈະປະກາດໝາຍເລກເສັ້ນທາງ ແລະໄລຍະຫ່າງຈຸດໝາຍປາຍທາງຂອງລົດເມ, ເຊັ່ນດຽວກັບຈຸດການເດີນທາງຜ່ານ ແລະຮ້ານຄ້າໃຫຍ່ໆ.

**ໂຄງການບັດຜ່ານຂຶ້ນລົດເມສຳລັບການນໍາຂັ້ນສູງ ແລະການນໍາຄົນພິການ (ອາຍຸເກີນ 65 ປີແລ້ວ)** ດ້ວຍລະຫັດທີ່ໃຊ້ໄດ້ ແລະຄົນພິການອາດຈະມີສິດໄດ້ຮັບໂຄງການຄ່າໂດຍສານເຄິ່ງຄ່າ ຫຼືການຜ່ານໂດຍບໍ່ມີຄ່າໂດຍສານ. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບວິທີຮ້ອງຂໍ ແລະໃຊ້ຄ່າໂດຍສານເຄິ່ງຄ່າຂອງ RIPTA ຫຼືບັດຜ່ານບໍ່ມີຄ່າໃຊ້ຈ່າຍ,
ກະລຸນາໂທຫາ RIPTA ທີ່ເບີ
(401) 781-9400.

